ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 147 ສປປ

ນະຄອນຫຼວງວຽງຈັນ, ວັນທີ 17. 7. 2007.

# ລັດຖະດຳລັດ

## ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການກວດກາລັດ.

~~~~~~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 41/ສພຊ, ລົງວັນທີ 2 ກໍລະກົດ 2007 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການກວດກາລັດ.
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 13/ຄປຈ, ລົງວັນທີ 13 ກໍລະກົດ 2007.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*<u>ມາດຕາ 1</u>* : ປະກາດໃຊ້ກົດໝາຍວ່າດ້ວຍ ການກວດກາລັດ.

*<u>ມາດຕາ 2</u>* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 41 /ສພຊ

**ມະຕິຕົກລົງ**

**ຂອງ**

**ສະພາແຫ່ງຊາດ ແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການກວດກາລັດ**

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການກວດກາລັດ ໃນວາລະປະຊຸມຕອນບ່າຍຂອງວັນທີ 2 ກໍລະກົດ 2007

**ກອງປະຊຸມໄດ້ຕົກລົງ:**

<u>ມາດຕາ 1.</u> ຮັບຮອງເອົາກົດໝາຍວ່າດ້ວຍ ການກວດກາລັດ ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

<u>ມາດຕາ 2.</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 2 ກໍລະກົດ 2007

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------------

ສະພາແຫ່ງຊາດ

ເລກທີ 02 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 2 ກໍລະກົດ 2007

# ກົດໝາຍ
# ວ່າດ້ວຍ ການກວດກາລັດ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍ ການກວດກາລັດ ກໍານົດຫຼັກການ, ລະບຽບການ, ມາດຕະການກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດກາລັດ ເພື່ອເຮັດໃຫ້ວຽກງານກວດກາ ເຂັ້ມແຂງ, ສາມາດດໍາເນີນການກວດກາ ຢ່າງມີປະສິດທິພາບ, ຊອກໃຫ້ເຫັນດ້ານດີ, ດ້ານຕັ້ງໜ້າ ເພື່ອຊຸກຍູ້ສົ່ງເສີມ; ຊອກໃຫ້ເຫັນດ້ານອ່ອນ, ດ້ານຫຍໍ້ທໍ້, ປາກົດການລະເມີດລະບຽບກົດໝາຍ ຂອງການຈັດຕັ້ງ ແລະ ບຸກຄົນ ເຊັ່ນ ການສໍ້ລາດບັງຫຼວງ, ອາດຍາສິດ, ການຟູມເຟືອຍ, ຊ່ອງຫວ່າງ ຂອງກົນໄກຄຸ້ມຄອງບໍລິ ຫານ ແລະ ອື່ນໆ ເພື່ອມີມາດຕະການສະກັດກັ້ນ, ຕ້ານ ແລະ ແກ້ໄຂ ແນໃສ່ເພີ່ມທະວີຄວາມສັກສິດ ຂອງການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ແລະ ສັງຄົມ, ປົກປ້ອງຜົນປະໂຫຍດ ຂອງລັດ ແລະ ລວມໝູ່ ລວມທັງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ.

**ມາດຕາ 2. ການກວດກາລັດ**

ການກວດກາລັດ ແມ່ນການຕິດຕາມ, ເກັບກໍາຂໍ້ມູນ, ຫຼັກຖານ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ໜ້າທີ່, ຄວາມຮັບຜິດຊອບ ຂອງການຈັດຕັ້ງ ແລະ ບຸກຄົນ ຢູ່ໃນອົງການບໍລິຫານລັດ ເພື່ອພິຈາລະນາ, ຕີລາຄາ, ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ພ້ອມທັງສະເໜີວິທີການ ແລະ ມາດຕະການ ໃຫ້ອົງການທີ່ກ່ຽວຂ້ອງ ແກ້ໄຂຜົນຂອງການກວດກາຕາມລະບຽບກົດໝາຍ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການກວດກາອົງການບໍລິຫານລັດ ໝາຍເຖິງ** ການເຄື່ອນໄຫວກວດກາການ ຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ໜ້າທີ່ຂອງກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງແຂວງ, ນະຄອນ, ເມືອງ, ເທດສະບານ, ອົງການຈັດຕັ້ງອື່ນ ຂອງລັດທີ່ກ່ຽວຂ້ອງ ລວມທັງ ການຈັດຕັ້ງ ແລະ ບຸກຄົນ ທີ່ຂຶ້ນກັບການຄຸ້ມຄອງ ໂດຍກົງຂອງອົງການດັ່ງກ່າວ;
2. **ການກວດກາລັດຕາມຂັ້ນບໍລິຫານການປົກຄອງ ໝາຍເຖິງ** ການເຄື່ອນໄຫວກວດກາ ຂອງອົງການກວດກາລັດ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ, ລະບຽບ ກົດໝາຍ, ໜ້າທີ່ຂອງການຈັດຕັ້ງ ແລະ ບຸກຄົນ ທີ່ຂຶ້ນກັບການຄຸ້ມຄອງ ຕາມຂັ້ນບໍລິຫານການປົກຄອງ;
3. **ການກວດກາລັດຕາມຂະແໜງການ ໝາຍເຖິງ** ການເຄື່ອນໄຫວກວດກາ ຂອງອົງການກວດກາລັດ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ບັນດາຂໍ້ກຳນົດ ທາງດ້ານວິຊາສະເພາະ, ເຕັກນິກ ຂອງການຈັດຕັ້ງ ແລະ ບຸກຄົນ ທີ່ຂຶ້ນກັບການຄຸ້ມຄອງຂອງຂະແໜງການນັ້ນ;
4. **ຄະນະກວດກາ ໝາຍເຖິງ** ໜ່ວຍງານທີ່ໄດ້ຮັບການແຕ່ງຕັ້ງໃຫ້ດຳເນີນການກວດກາ ໃນແຕ່ລະຄັ້ງ;
5. **ພະນັກງານກວດກາລັດ ໝາຍເຖິງ** ບຸກຄົນທີ່ບັນຈຸເຂົ້າໃນອົງການກວດກາລັດ ຕາມຂັ້ນບໍລິຫານການປົກຄອງ ແລະ ຕາມຂະແໜງການ ຊຶ່ງໄດ້ຮັບການແຕ່ງຕັ້ງໃຫ້ເຮັດໜ້າທີ່ກວດກາລັດ ຢູ່ສູນກາງ ແລະ ທ້ອງຖິ່ນ;
6. **ຜູ້ອອກຂໍ້ຕົກລົງ ໝາຍເຖິງ** ການຈັດຕັ້ງ ຫຼື ບຸກຄົນ ທີ່ມີສິດອອກຂໍ້ຕົກລົງ ກ່ຽວກັບການກວດກາ;
7. **ພະແນກການອ້ອມຂ້າງແຂວງ, ນະຄອນ ໝາຍເຖິງ** ພະແນກການ ທີ່ຂຶ້ນກັບອົງການປົກຄອງແຂວງ, ນະຄອນ ລວມທັງ ຫ້ອງວ່າການປົກຄອງແຂວງ, ນະຄອນ.

**ມາດຕາ 4. ນະໂຍບາຍ ກ່ຽວກັບວຽກງານກວດກາລັດ**

ລັດສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ມີການກວດກາຢ່າງເຂັ້ມງວດ ດ້ວຍການວາງ ນະໂຍບາຍ, ລະບຽບກົດໝາຍ ເພື່ອເປັນພື້ນຖານ ໃນການເຄື່ອນໄຫວວຽກງານກວດກາລັດ ໃຫ້ມີປະສິດທິພາບ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ແລະ ສັງຄົມ ມີ ຄວາມເຂັ້ມແຂງ, ຄວາມໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 5. ຫຼັກການ ຂອງການກວດກາລັດ**

ການກວດກາລັດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້ :

1. ປະຕິບັດຕາມລະບຽບກົດໝາຍ ຢ່າງເຂັ້ມງວດ;
2. ມີປະຊາທິປະໄຕ, ພາວະວິໄສ ແລະ ມີຄວາມໂປ່ງໃສ;
3. ຮັບປະກັນຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍຕາມລະບຽບການ;

4. ມີສ່ວນຮ່ວມຂອງປະຊາຊົນ ແລະ ການຈັດຕັ້ງທຸກຂັ້ນ ລວມທັງສື່ມວນຊົນ;
5. ບໍ່ສ້າງຄວາມຫຍຸ້ງຍາກທີ່ບໍ່ຈຳເປັນ ໃຫ້ແກ່ການເຄື່ອນໄຫວວຽກງານຂອງການຈັດຕັ້ງ ແລະ ບຸກຄົນ ທີ່ຖືກກວດກາ.

**ມາດຕາ 6. ຄວາມຮັບຜິດຊອບ ກ່ຽວກັບການກວດກາລັດ**

ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນ, ເຈົ້າເມືອງ, ຫົວໜ້າເທດສະບານ ແລະ ຫົວໜ້າອົງການຈັດຕັ້ງອື່ນ ຂອງລັດທີ່ກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງ, ຊີ້ນຳ, ສ້າງເງື່ອນໄຂອຳນວຍຄວາມສະດວກ ໃນການເຄື່ອນໄຫວກວດກາລັດ ໂດຍສະເພາະການອະນຸມັດໂຄງການ, ແຜນການກວດກາລັດ ໃນຂອບເຂດຄວາມຮັບຜິດຊອບ, ສິດ ໜ້າທີ່ຂອງຕົນ ແລະ ແກ້ໄຂຜົນຂອງການກວດກາ ຢ່າງເຂັ້ມງວດ ຕາມລະບຽບກົດໝາຍ.

ຫົວໜ້າອົງການກວດກາລັດ ແຕ່ລະຂັ້ນ, ຫົວໜ້າຄະນະກວດກາ ແລະ ພະນັກງານກວດກາລັດ ໃນການເຄື່ອນໄຫວກວດກາ ຕ້ອງປະຕິບັດຕາມພາລະບົດບາດ, ສິດ ໜ້າທີ່ຂອງຕົນ ຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ແລະ ຕ້ອງຮັບຜິດຊອບ ຕໍ່ການປະຕິບັດໜ້າທີ່, ການຕົກລົງ ຫຼື ການກະທຳຂອງຕົນ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜູ້ຖືກກວດກາ.

**ມາດຕາ 7. ສິດ ແລະ ພັນທະ ປະກອບສ່ວນໃນການກວດກາລັດ**

ບັນດາອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ ມີສິດ ແລະ ພັນທະປະກອບ ສ່ວນເຂົ້າໃນວຽກງານກວດກາລັດ ດ້ວຍການເຂົ້າຮ່ວມ, ອຳນວຍຄວາມສະດວກ, ລາຍງານ, ສະໜອງຂໍ້ມູນ, ຫຼັກຖານ ຢ່າງທັນການ ລວມທັງ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດການຕົກລົງກ່ຽວກັບ ການແກ້ໄຂຜົນຂອງການກວດກາໃຫ້ສຳເລັດ.

**ມາດຕາ 8. ການປົກປ້ອງ**

ພະນັກງານກວດກາລັດ, ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນ, ພະຍານ, ຜູ້ຊ່ຽວຊານ ແລະ ຜູ້ເຂົ້າຮ່ວມໃນການກວດກາລັດ ຕ້ອງໄດ້ຮັບການປົກປ້ອງຕາມລະບຽບກົດໝາຍ ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດຊື່ສຽງ, ຊັບສິນ ຂອງຜູ້ຖືກກວດກາ ຫຼື ຜູ້ອື່ນ.

**ມາດຕາ 9. ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງ, ພະນັກງານນຳພາ, ພະນັກງານຄຸ້ມຄອງ, ພະນັກງານວິຊາການ, ພະນັກງານວິສາຫະກິດຂອງລັດ, ລັດຖະກອນ ທີ່ປະຕິບັດໜ້າທີ່ໃນອົງການບໍລິຫານ ແລະ ອົງການຈັດຕັ້ງອື່ນ ຂອງລັດທີ່ກ່ຽວຂ້ອງ ນັບແຕ່ສູນກາງ ລົງຮອດທ້ອງຖິ່ນ.

ສຳລັບສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງອື່ນຂອງລັດນັ້ນ ໃຫ້ສ້າງຕັ້ງອົງການກວດກາລັດຂອງຕົນຂຶ້ນຕ່າງຫາກ ແຕ່ໃຫ້ເຄື່ອນໄຫວກວດກາຕາມກົດໝາຍສະບັບນີ້.

ສ່ວນການຈັດຕັ້ງ ແລະ ການເຄື່ອນໄຫວກວດກາລັດ ຢູ່ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ໄດ້ກຳນົດໄວ້ຕ່າງຫາກ.

**ມາດຕາ 10. ການພົວພັນຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານກວດກາລັດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນ ໂລຢີ, ດ້ວຍການຝຶກອົບຮົມ ຫຼື ສຳມະນາ, ຍົກລະດັບຄວາມຮູ້ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານກວດກາ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ.

## ພາກທີ II
## ປະເພດ, ບ່ອນອີງ, ຮູບການ, ເນື້ອໃນ ແລະ ເປົ້າໝາຍ ຂອງການກວດກາລັດ

**ມາດຕາ 11. ປະເພດການກວດກາ**

ການກວດກາລັດ ມີສອງປະເພດ ຄື :

1. ການກວດກາ ຕາມຂັ້ນບໍລິຫານການປົກຄອງ;
2. ການກວດກາ ຕາມຂະແໜງການ.

**ມາດຕາ 12. ບ່ອນອີງໃນການຕົກລົງກວດກາ**

ການຕົກລົງກວດກາລັດ ແມ່ນອີງໃສ່ :

1. ໂຄງການ, ແຜນການກວດກາ;
2. ຄຳສັ່ງ, ແຈ້ງການ ຫຼື ຂໍ້ຕົກລົງ;
3. ຄຳສະເໜີຂອງພົນລະເມືອງ;
4. ການພົບເຫັນ ການລະເມີດລະບຽບກົດໝາຍ.

**ມາດຕາ 13. ຮູບການກວດກາ**

ການກວດກາລັດ ມີສາມຮູບການ ດັ່ງນີ້:

1. ການກວດກາ ຕາມແຜນການປົກກະຕິ;
2. ການກວດກາ ຕາມຄຳສັ່ງ ຫຼື ຄຳສະເໜີ;
3. ການກວດກາ ແບບກະທັນຫັນ.

ການກວດກາ ຕາມແຜນການປົກກະຕິ ໝາຍເຖິງ ການກວດກາຕາມແຜນການ ຂອງອົງການບໍລິຫານ ແລະ ຂອງຄະນະກວດກາລັດແຕ່ລະຂັ້ນ ທີ່ໄດ້ວາງໄວ້.

ການກວດກາ ຕາມຄຳສັ່ງ ຫຼື ຄຳສະເໜີ ໝາຍເຖິງ ການກວດກາຕາມຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຂອງຫົວໜ້າອົງການບໍລິຫານ, ຂອງຄະນະກວດກາ ລັດແຕ່ລະຂັ້ນ ແລະ ຄຳສະເໜີຂອງພົນລະເມືອງ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຊາບລ່ວງໜ້າ.

ການກວດກາ ແບບກະທັນຫັນ ໝາຍເຖິງ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຊາບລ່ວງໜ້າ.

### ມາດຕາ 14. ເນື້ອໃນການກວດກາ

ເນື້ອໃນການກວດກາລັດ ແມ່ນ ການກວດກາການຈັດຕັ້ງປະຕິບັດ:

- ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ສິດ ໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການຄຸ້ມຄອງບໍລິຫານ ຕາມຂັ້ນບໍລິຫານການປົກຄອງ;
- ລະບຽບການ ດ້ານວິຊາສະເພາະ, ເຕັກນິກ, ຫຼັກການຄຸ້ມຄອງ ຕາມຂະແໜງການ.

### ມາດຕາ 15. ເປົ້າໝາຍການກວດກາ

ເປົ້າໝາຍການກວດກາລັດ ຕາມຂັ້ນບໍລິຫານການປົກຄອງ ແລະ ຕາມຂະແໜງການ ແມ່ນ ການຈັດຕັ້ງ ແລະ ບຸກຄົນ ທີ່ຂຶ້ນກັບຄວາມຮັບຜິດຊອບ ຂອງອົງການບໍລິຫານ ແລະ ອົງການຈັດຕັ້ງອື່ນ ຂອງລັດທີ່ກ່ຽວຂ້ອງ ຂັ້ນນັ້ນ ແລະ ຂະແໜງການນັ້ນ.

## ພາກທີ III
## ການເຄື່ອນໄຫວກວດກາລັດ

## ໝວດທີ 1
## ຂັ້ນຕອນ ຂອງການກວດກາລັດ

### ມາດຕາ 16. ຂັ້ນຕອນ ຂອງການກວດກາ

ການກວດກາລັດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້ :

1. ການຕົກລົງກວດກາ;
2. ການກະກຽມການກວດກາ;
3. ການດໍາເນີນການກວດກາ;
4. ການສະຫຼຸບຜົນຂອງການກວດກາ;
5. ການລາຍງານຜົນຂອງການກວດກາ.

### ມາດຕາ 17. ຜູ້ຕົກລົງໃຫ້ກວດກາ

ຜູ້ມີສິດຕົກລົງໃຫ້ກວດກາ ຕາມແຕ່ກໍລະນີມີ: ນາຍົກລັດຖະມົນຕີ, ປະທານອົງການກວດກາລັດຖະບານ, ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນ, ຫົວໜ້າພະແນກກວດກາລັດແຂວງ, ນະຄອນ, ຫົວໜ້າພະແນກ ການອ້ອມຂ້າງແຂວງ, ນະຄອນ, ເຈົ້າເມືອງ, ຫົວໜ້າເທດສະບານ, ຫົວໜ້າຫ້ອງການ ກວດກາລັດເມືອງ, ເທດສະບານ.

**ມາດຕາ 18. ການກະກຽມການກວດກາ**

ການກະກຽມການກວດກາ ໃຫ້ປະຕິບັດ ດັ່ງນີ້ :

1. ແຕ່ງຕັ້ງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ;
2. ເກັບກຳຂໍ້ມູນ, ເອກະສານ, ສ້າງແຜນການກວດກາ ໂດຍກຳນົດຈຸດປະສົງ, ເນື້ອໃນຂອງການກວດກາ, ຮ່າງຄຳຖາມເຈາະຈີ້ມ, ຮ່າງບົດບັນທຶກ, ກຽມໂຄງຮ່າງບົດລາຍງານ ເພື່ອໃຫ້ເປົ້າໝາຍລາຍງານ ແລະ ຕາຕະລາງເຄື່ອນໄຫວລະອຽດໃນແຕ່ລະໄລຍະ;
3. ກະກຽມນິຕິກຳຕ່າງໆ ທີ່ພົວພັນກັບການກວດກາ, ງົບປະມານ, ພາຫະນະ, ວັດຖຸອຸປະກອນຮັບໃຊ້ ທີ່ຈຳເປັນ;
4. ຈັດຕັ້ງແນະນຳ ພະນັກງານທີ່ຈະລົງກວດກາ ໃຫ້ກຳແໜ້ນຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນຂອງການກວດກາ, ລະບຽບການພາຍໃນຂອງຄະນະກວດກາ ແລະ ແບ່ງຄວາມຮັບຜິດຊອບ ໃຫ້ຄະນະກວດກາແຕ່ລະຄົນ.

**ມາດຕາ 19. ການດຳເນີນການກວດກາ**

ການກວດກາ ຕ້ອງດຳເນີນດັ່ງນີ້ :

1. ແຈ້ງຂໍ້ຕົກລົງ ແລະ ແຜນການ ກ່ຽວກັບການກວດກາ ຕໍ່ຫົວໜ້າອົງການ ຂອງເປົ້າໝາຍຖືກກວດກາ ແລະ ເກັບກຳຂໍ້ມູນ ແລ້ວແຈ້ງຂໍ້ຕົກລົງ ແລະ ແຜນການ ໃຫ້ຜູ້ຖືກກວດກາ ຊາບກ່ອນການດຳເນີນການກວດກາ ເຈັດວັນ ເວັ້ນເສຍແຕ່ການກວດກາແບບກະທັນຫັນ;
2. ດຳເນີນການກວດກາຕາມແຜນການ ເປັນຕົ້ນ ຮັບຟັງການລາຍງານຂອງເປົ້າໝາຍຖືກກວດກາ ພ້ອມທັງເຮັດບົດບັນທຶກການລາຍງານ ແລະ ການມອບ-ຮັບເອກະສານ;
3. ລາຍງານ ແລະ ຂໍການຊີ້ນຳ ກ່ຽວກັບການດຳເນີນການກວດກາ ໃນແຕ່ລະໄລຍະ ຈາກຂັ້ນເທິງຂອງຕົນ;
4. ເຮັດບົດບັນທຶກການກວດກາ.

**ມາດຕາ 20. ກຳນົດເວລາ ການກວດກາ**

ກຳນົດເວລາດຳເນີນການກວດກາ ມີດັ່ງນີ້:

- ອົງການກວດກາລັດຖະບານ ບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ມື້ດຳເນີນການກວດກາ ເປັນຕົ້ນໄປ; ຖ້າຫາກການກວດກາບໍ່ສຳເລັດ ກໍສາມາດດຳເນີນຕໍ່ໄປໄດ້ຕື່ມອີກ ສາມສິບວັນ, ໃນກໍລະນີທີ່ມີຄວາມຫຍຸ້ງຍາກສັບສົນເປັນພິເສດ ຊຶ່ງພົວພັນເຖິງຫຼາຍຂະແໜງການ, ຫຼາຍທ້ອງຖິ່ນ ກໍສາມາດຕໍ່ເວລາໄດ້ຕື່ມອີກ ແຕ່ທັງໝົດບໍ່ໃຫ້ເກີນ ໜຶ່ງຮ້ອຍແປດສິບວັນ;
- ກົມກວດກາລັດ ກະຊວງ, ອົງການທຽບເທົ່າກະຊວງ, ພະແນກກວດກາລັດ ແຂວງ, ນະຄອນ ບໍ່ໃຫ້ເກີນ ຫົກສິບວັນ ນັບແຕ່ມື້ດຳເນີນການກວດກາເປັນຕົ້ນໄປ, ໃນກໍລະນີທີ່ມີຄວາມຫຍຸ້ງຍາກສັບສົນ ກໍສາມາດຕໍ່ເວລາໄດ້ຕື່ມອີກ ສາມສິບວັນ;
- ຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ, ຫ້ອງການ ກວດກາລັດເມືອງ, ເທດສະບານ ບໍ່ໃຫ້ເກີນ ສາມສິບວັນ ນັບແຕ່ມື້ດຳເນີນການກວດກາ ເປັນຕົ້ນໄປ, ໃນກໍລະນີທີ່ມີຄວາມຫຍຸ້ງຍາກສັບສົນ ຫລື ຢູ່ຫ່າງໄກສອກຫຼີກ ກໍສາມາດດຳເນີນຕໍ່ໄປໄດ້ຕື່ມອີກ ສິບຫ້າວັນ.

**ມາດຕາ 21. ການສະຫຼຸບຜົນຂອງການກວດກາ**

ການສະຫຼຸບຜົນຂອງການກວດກາ ຕ້ອງປະຕິບັດ ດັ່ງນີ້ :

1. ສັງລວມບັນດາເອກະສານ, ຂໍ້ມູນ, ຫຼັກຖານຕ່າງໆ, ບົດບັນທຶກ ທີ່ໄດ້ກວດກາແລ້ວ ມາເປັນບົດສະຫຼຸບຜົນຂອງການກວດກາ;
2. ຕີລາຄາ, ໄຈ້ແຍກໃຫ້ລະອຽດຈະແຈ້ງ ດ້ານດີ, ດ້ານອ່ອນ, ຄວາມຖືກ, ຄວາມຜິດ ຂອງເປົ້າໝາຍຖືກກວດກາ ລວມທັງສະເໜີມາດຕະການ ແລະ ວິທີການແກ້ໄຂ ຕາມລະບຽບກົດໝາຍ;
3. ຜ່ານຮ່າງບົດສະຫຼຸບພາຍໃນຄະນະກວດກາ ແລ້ວສົ່ງຮ່າງບົດສະຫຼຸບດັ່ງກ່າວ ໃຫ້ການນຳຂອງເປົ້າໝາຍຖືກກວດກາ ແລະ ຜູ້ຖືກກວດກາ ເພື່ອມີຄຳເຫັນ ແລະ ຢັ້ງຢືນ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນໄດ້ຮັບເປັນຕົ້ນໄປ;
4. ຄະນະກວດກາ, ຫົວໜ້າອົງການ ຂອງເປົ້າໝາຍຖືກກວດກາ ແລະ ຜູ້ຖືກກວດກາ ລົງລາຍເຊັນໃສ່ບົດສະຫຼຸບ ເພື່ອຢັ້ງຢືນຜົນຂອງການກວດກາ.

**ມາດຕາ 22. ການລາຍງານຜົນຂອງການກວດກາ**

ພາຍຫຼັງສຳເລັດການກວດກາແລ້ວ ຄະນະກວດກາ ຕ້ອງສົ່ງບົດສະຫຼຸບຜົນຂອງການກວດກາ ໃຫ້ຜູ້ອອກຂໍ້ຕົກລົງກ່ຽວກັບການກວດການັ້ນ ເພື່ອພິຈາລະນາ ກ່ຽວກັບການແກ້ໄຂຜົນຂອງການກວດກາ ຕາມລະບຽບກົດໝາຍ ແລະ ສົ່ງບົດລາຍງານຜົນຂອງການກວດກາ ໃຫ້ຂັ້ນເທິງຂອງຕົນ.

## ໝວດທີ 2
## ການພິຈາລະນາ ແລະ ແກ້ໄຂ ຜົນຂອງການກວດກາ

**ມາດຕາ 23. ການພິຈາລະນາ ແລະ ແກ້ໄຂ ຜົນຂອງການກວດກາ**

ຜູ້ອອກຂໍ້ຕົກລົງ ກ່ຽວກັບການກວດກາ ຕ້ອງຄົ້ນຄວ້າພິຈາລະນາຜົນຂອງການກວດກາ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບບົດສະຫຼຸບຜົນຂອງການກວດກາເປັນຕົ້ນໄປ ແລະ ແຈ້ງຜົນຂອງການພິຈາລະນານັ້ນ ໃຫ້ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາ ແລະ ຜູ້ຖືກກວດກາ ຊາບ ພາຍໃນກຳນົດເວລາ ເຈັດວັນ.

ຖ້າຫາກເຫັນວ່າ ມີການລະເມີດລະບຽບກົດໝາຍໃນສະຖານເບົາ, ສ້າງຄວາມເສຍຫາຍບໍ່ຫຼວງຫຼາຍ ຜູ້ອອກຂໍ້ຕົກລົງນັ້ນ ຕ້ອງສະເໜີໃຫ້ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາແກ້ໄຂ ໂດຍນຳໃຊ້ມາດຕະການສຶກສາອົບຮົມ, ກ່າວເຕືອນ ຫຼື ລົງວິໄນ ຕໍ່ຜູ້ລະເມີດດັ່ງກ່າວ ພ້ອມທັງໃຫ້ໃຊ້ແທນຄ່າເສຍຫາຍທີ່ໄດ້ກໍ່ຂຶ້ນນັ້ນ.

ໃນກໍລະນີທີ່ເຫັນວ່າ ເປັນການລະເມີດທາງແພ່ງ ຫຼື ການກະທຳຜິດທາງອາຍາ ຜູ້ອອກຂໍ້ຕົກລົງນັ້ນ ຕ້ອງສົ່ງສຳນວນຄະດີ ໃຫ້ອົງການທີ່ກ່ຽວຂ້ອງ ດຳເນີນຄະດີຕາມຂະບວນການຍຸຕິທຳ.

ອົງການທີ່ກ່ຽວຂ້ອງເທິງນີ້ ຕ້ອງແຈ້ງຜົນຂອງການແກ້ໄຂ ໃຫ້ຜູ້ອອກຂໍ້ຕົກລົງ ກ່ຽວກັບການກວດກາຊາບ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ.

**ມາດຕາ 24. ການຕິດຕາມກວດກາ ການແກ້ໄຂຜົນຂອງການກວດກາ**

ໃນກໍລະນີອົງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້ ຫາກບໍ່ແກ້ໄຂ ຫຼື ມີການແກ້ໄຂທີ່ເຫັນວ່າບໍ່ເໝາະສົມ ຜູ້ອອກຂໍ້ຕົກລົງ ກ່ຽວກັບການກວດກາ ມີສິດສະເໜີ ໃຫ້ຂັ້ນເທິງຂອງອົງການທີ່ກ່ຽວຂ້ອງນັ້ນ ພິຈາລະນາ ແລະ ແກ້ໄຂ ພ້ອມທັງລາຍງານ ໃຫ້ອົງການກວດກາລັດຂັ້ນເທິງຂອງຕົນຮັບຊາບ ເພື່ອມີທິດຊີ້ນໍາ.

**ມາດຕາ 25. ກໍານົດເວລາ ການເກັບຮັກສາເອກະສານ**

ເອກະສານ ກ່ຽວກັບຜົນຂອງການກວດກາ ຕ້ອງຄຸ້ມຄອງ ແລະ ເກັບຮັກສາໄວ້ ຢ່າງໜ້ອຍ ສິບປີ.

## ພາກທີ IV
## ອົງການກວດກາລັດ

### ໝວດທີ 1
### ລະບົບອົງການກວດກາລັດ

**ມາດຕາ 26. ອົງການກວດກາລັດ**

ອົງການກວດກາລັດ ແມ່ນອົງການທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຕາມຂັ້ນບໍລິຫານການປົກຄອງ ແລະ ຕາມຂະແໜງການ ຊຶ່ງຢູ່ພາຍໃຕ້ການຊີ້ນໍາໂດຍກົງ ຂອງຫົວໜ້າ ອົງການບໍລິຫານຂັ້ນຂອງຕົນ ແລະ ຢູ່ພາຍໃຕ້ການແນະນໍາດ້ານວຽກງານວິຊາສະເພາະ ຂອງອົງການກວດກາລັດຂັ້ນເທິງ.

**ມາດຕາ 27. ລະບົບອົງການກວດກາລັດ**

ລະບົບອົງການກວດກາລັດ ມີດັ່ງນີ້:

1. ອົງການກວດກາລັດ ຕາມຂັ້ນບໍລິຫານການປົກຄອງ ຊຶ່ງປະກອບດ້ວຍ:
   - ອົງການກວດກາລັດຖະບານ;
   - ພະແນກກວດກາລັດແຂວງ, ນະຄອນ;
   - ຫ້ອງການກວດກາລັດເມືອງ, ເທດສະບານ.
2. ອົງການກວດກາລັດ ຕາມຂະແໜງການ ຊຶ່ງປະກອບດ້ວຍ:
   - ກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ;
   - ຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ.

ສໍາລັບການຈັດຕັ້ງກວດກາລັດ ຂັ້ນທະບວງນັ້ນ ຈະສ້າງເປັນກົມ ຫຼື ພະແນກກໍໄດ້ ຕາມການຕົກລົງຂອງລັດຖະບານ.

# ໝວດທີ 2
# ອົງການກວດກາລັດ ຕາມຂັ້ນບໍລິຫານການປົກຄອງ

## ກ. ອົງການກວດກາລັດຖະບານ

**ມາດຕາ 28. ທີ່ຕັ້ງ ແລະ ພາລະບົດບາດ**

ອົງການກວດກາລັດຖະບານ ແມ່ນ ອົງການກວດກາລັດຂັ້ນສູນກາງ, ມີຖານະທຽບເທົ່າກະຊວງ ແລະ ຢູ່ໃນໂຄງປະກອບຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ກ່ຽວກັບການກວດກາລັດ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການຄົ້ນຄວ້າ, ພິຈາລະນາຄໍາສະເໜີຂອງພົນລະເມືອງ ໃນຂອບເຂດສິດ, ໜ້າທີ່ຂອງລັດຖະບານ ແລະ ຊີ້ນໍາວຽກງານດັ່ງກ່າວ ໃນຂອບເຂດທົ່ວປະເທດ.

**ມາດຕາ 29. ສິດ ແລະ ໜ້າທີ່**

ອົງການກວດກາລັດຖະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າແຜນຍຸດທະສາດ ກ່ຽວກັບວຽກງານກວດກາລັດ, ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຄົ້ນຄວ້ານະໂຍບາຍ, ແຜນການ, ມະຕິ, ຄໍາສັ່ງ ຂອງລັດຖະບານ ແລະ ຫັນມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ຂອງອົງການຕົນ ແລ້ວຈັດຕັ້ງປະ ຕິບັດ;
3. ສະເໜີ ສ້າງ ຫຼື ປັບປຸງ ກົດໝາຍ, ລັດຖະບັນຍັດ, ລັດຖະດໍາລັດ, ດໍາລັດ ຕໍ່ລັດຖະບານເພື່ອພິຈາລະນາ; ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ເພື່ອຄຸ້ມຄອງມະຫາພາກກ່ຽວກັບວຽກງານກວດກາລັດ;
4. ໂຄສະນາເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານກວດກາ;
5. ຊີ້ນໍາ, ກວດກາການຈັດຕັ້ງປະຕິບັດວຽກງານກວດກາລັດ ໃນຂອບເຂດທົ່ວປະເທດ;
6. ກໍ່ສ້າງບໍາລຸງ, ຍົກລະດັບວິຊາສະເພາະວຽກງານກວດກາ ໃຫ້ຖັນແຖວພະນັກງານ, ລັດຖະກອນ ທີ່ເຮັດວຽກງານກວດກາລັດ;
7. ກວດກາການປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ສິດ ໜ້າທີ່, ຄວາມຮັບຜິດຊອບຂອງກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ ແລະ ພະນັກງານບໍລິຫານຂັ້ນສູນກາງຄຸ້ມຄອງ;
8. ກວດກາວຽກງານ ທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ຫຼາຍແຂວງ, ນະຄອນ;
9. ຄົ້ນຄວ້າ, ພິຈາລະນາຄໍາສະເໜີຂອງພົນລະເມືອງ ກ່ຽວກັບການກະທໍາ ຫຼື ການຕົກລົງບັນຫາໃດໜຶ່ງ ທີ່ລະເມີດລະບຽບກົດໝາຍ ຂອງການຈັດຕັ້ງ ຫຼື ພະນັກງານ ບໍລິຫານຂັ້ນສູນກາງ ຄຸ້ມຄອງ; ຄົ້ນຄວ້າ, ພິຈາລະນາຄໍາສະເໜີຂອງພົນລະເມືອງ ທີ່ກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ ໄດ້ແກ້ໄຂແລ້ວ ແຕ່ພົນລະເມືອງຜູ້ນັ້ນ ເຫັນວ່າຍັງບໍ່ເໝາະສົມ;

10. ປະຕິບັດສິດ ໜ້າທີ່ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
11. ພົວພັນ ແລະ ປະສານສົມທົບກັບ ບັນດາອົງການຈັດຕັ້ງຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງອົງການທີ່ຮັບຜິດຊອບ ກ່ຽວກັບການກວດສອບແຫ່ງລັດ ແລະ ກວດສອບເອກະລາດ ກ່ຽວກັບການດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;
12. ສະເໜີມາດຕະການ, ວິທີການ ແກ້ໄຂ ຜົນຂອງການກວດກາລັດ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອພິຈາລະນາຕົກລົງ ແລະ ລາຍງານ ໃຫ້ລັດຖະບານ;
13. ຮ່ວມມືກັບສາກົນ ກ່ຽວກັບວຽກງານກວດກາລັດ;
14. ສະຫຼຸບສັງລວມ, ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ແລະ ຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງລັດຖະບານ ໃຫ້ນາຍົກລັດຖະມົນຕີ ແລະ ຄະນະປະຈຳສະພາແຫ່ງຊາດ ຢ່າງເປັນປົກກະຕິ;
15. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງນາຍົກລັດຖະມົນຕີ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 30. ໂຄງປະກອບ**

ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດຖະບານ ມີດັ່ງນີ້ :

- ປະທານ;
- ຮອງປະທານ ຈຳນວນໜຶ່ງ;
- ພະນັກງານວິຊາການ.

ສຳລັບໂຄງປະກອບການຈັດຕັ້ງ ຂອງອົງການກວດກາລັດຖະບານ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 31. ປະທານອົງການກວດກາລັດຖະບານ**

ປະທານ ອົງການກວດກາລັດຖະບານ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຕາມວິທີການດຽວກັນກັບສະມາຊິກລັດຖະບານ, ມີຄວາມຮັບຜິດຊອບ ຕໍ່ນາຍົກລັດຖະມົນຕີ ແລະ ມີໜ້າທີ່ລາຍງານ ຕໍ່ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການກວດກາລັດ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

ປະທານ ອົງການກວດກາລັດຖະບານ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ນຳເອົາມະຕິກອງປະຊຸມລັດຖະບານ, ມະຕິກອງປະຊຸມວຽກງານກວດກາທົ່ວປະເທດ ມາຜັນຂະຫຍາຍເປັນແຜນການ, ໂຄງການ ຂອງຕົນ ແລະ ຈັດຕັ້ງປະຕິບັດ;
2. ຊີ້ນຳ, ນຳພາ ແລະ ກວດກາການຈັດຕັ້ງປະຕິບັດວຽກງານກວດກາລັດ ໃນຂອບເຂດທົ່ວປະເທດ;
3. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ ເພື່ອເພີ່ມປະສິດທິພາບ ໃນການຈັດຕັ້ງ ແລະ ເຄື່ອນໄຫວການກວດກາລັດ ແຕ່ສູນກາງລົງຮອດທ້ອງຖິ່ນ;

4. ໂຈະການປະຕິບັດ, ລຶບລ້າງ ຫຼື ຍົກເລີກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ຫຼື ນິຕິກໍາອື່ນ ຂອງອົງການກວດກາລັດຂັ້ນລຸ່ມ ທີ່ຂັດກັບລະບຽບກົດໝາຍ ຫຼື ຂັດກັບນິຕິກໍາ ຂອງອົງການກວດກາລັດຂັ້ນເທິງ;
5. ປະສານສົມທົບກັບ ອົງການໄອຍະການປະຊາຊົນສູງສຸດ ເພື່ອສະເໜີຕໍ່ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນ ໂຈະການຈັດຕັ້ງປະຕິບັດ, ລຶບລ້າງ ຫຼື ຍົກເລີກນິຕິກໍາ ຂອງຫົວໜ້າອົງການດັ່ງກ່າວ ທີ່ຂັດກັບລະບຽບກົດໝາຍ; ໃນກໍລະນີທີ່ບໍ່ປະຕິບັດຕາມການສະເໜີນັ້ນ ແມ່ນມີສິດສະເໜີຕໍ່ນາຍົກລັດຖະມົນຕີ ເພື່ອພິຈາລະນາ;
6. ສະເໜີ ສ້າງ ຫຼື ປັບປຸງ ກົດໝາຍ, ລັດຖະບັນຍັດ, ລັດຖະດໍາລັດ, ດໍາລັດ ກ່ຽວກັບວຽກງານກວດກາລັດ ຕໍ່ລັດຖະບານ;
7. ຕົກລົງດໍາເນີນການກວດກາລັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ໃນກໍລະນີທີ່ມີຄວາມສໍາຄັນ ຕ້ອງສະເໜີລັດຖະບານ ເພື່ອພິຈາລະນາ;
8. ສະເໜີໃຫ້ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າ ຄອງນະຄອນ ດໍາເນີນການກວດກາ ໃນຂອບເຂດການຄຸ້ມຄອງຂອງກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະ ນະຄອນ;
9. ສະເໜີໃຫ້ນາຍົກລັດຖະມົນຕີ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງ ຂອງລັດຖະບານ;
10. ພິຈາລະນາບັນຫາ ທີ່ຫົວໜ້າກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ ບໍ່ເປັນເອກະພາບກັບລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ແລະ ຫົວໜ້າພະແນກກວດກາລັດແຂວງ, ນະຄອນ ບໍ່ເປັນເອກະພາບ ກັບເຈົ້າແຂວງ, ເຈົ້າຄອງນະຄອນ ກ່ຽວກັບວຽກງານກວດກາລັດ ແມ່ນສະເໜີໃຫ້ພິຈາລະນາຄືນໃໝ່; ໃນກໍລະນີ ທີ່ບໍ່ພິຈາລະນາຄືນ ຫຼື ໄດ້ພິຈາລະນາແລ້ວ ແຕ່ເຫັນວ່າຍັງບໍ່ເໝາະສົມ ກໍມີສິດລາຍງານຕໍ່ນາຍົກລັດຖະມົນຕີ ເພື່ອພິຈາລະນາຕົກລົງ;
11. ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຮອງປະທານ, ຫົວໜ້າຫ້ອງການ ແລະ ຫົວໜ້າກົມ ຂອງອົງການກວດກາລັດຖະບານ ເພື່ອໃຫ້ນາຍົກລັດຖະມົນຕີ ພິຈາລະນາ;
12. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກ ຂອງອົງການກວດກາລັດຖະບານ;
13. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຫົວໜ້າ ແລະ ຮອງຫົວໜ້າພະແນກກວດກາລັດ ແຂວງ, ນະຄອນ, ຫົວໜ້າຫ້ອງການກວດກາລັດເມືອງ, ເທດສະບານ ຕາມການສະເໜີຂອງອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;
14. ພົວພັນຮ່ວມມືກັບຕ່າງປະເທດ ຕາມພາລະບົດບາດຂອງຕົນ ແລະ ຕາມການມອບໝາຍຂອງລັດຖະບານ;
15. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງນາຍົກລັດຖະມົນຕີ ແລະ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 32. ຮອງປະທານ ອົງການກວດກາລັດຖະບານ**

ຮອງປະທານ ອົງການກວດກາລັດຖະບານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານອົງການກວດກາລັດຖະບານ.

ຮອງປະທານອົງການກວດກາລັດຖະບານ ມີສິດ ແລະ ໜ້າທີ່ ຊ່ວຍວຽກປະທານ ອົງການກວດກາລັດຖະບານ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ໃນກໍລະນີທີ່ ປະທານບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງປະທານ ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ ເປັນຜູ້ວ່າການແທນ.

## ຂ. ພະແນກກວດກາລັດ ແຂວງ, ນະຄອນ

**ມາດຕາ 33. ທີ່ຕັ້ງ ແລະ ພາລະບົດບາດ**

ພະແນກກວດກາລັດແຂວງ, ນະຄອນ ແມ່ນການຈັດຕັ້ງໃນໂຄງປະກອບກົງຈັກ ຂອງອົງການປົກຄອງແຂວງ, ນະຄອນ, ມີພາລະບົດບາດເປັນເສນາທິການ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນ ກ່ຽວກັບການກວດກາລັດ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ໃນຂອບເຂດ ສິດ, ໜ້າທີ່ ຂອງອົງການປົກຄອງແຂວງ, ນະຄອນ ແລະ ຊີ້ນຳ ຫ້ອງການກວດກາລັດ ເມືອງ, ເທດສະບານ ແລະ ຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ ກ່ຽວກັບວຽກງານດັ່ງກ່າວ.

ພະແນກກວດກາລັດແຂວງ, ນະຄອນ ເຄື່ອນໄຫວວຽກງານ ພາຍໃຕ້ການຊີ້ນຳ ດ້ານວິຊາສະເພາະ ຂອງອົງການກວດກາລັດຖະບານ.

**ມາດຕາ 34. ສິດ ແລະ ໜ້າທີ່**

ພະແນກກວດກາລັດແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຄົ້ນຄວ້າຫັນນະໂຍບາຍ, ແຜນການ, ມະຕິ, ຄຳສັ່ງ ຂອງອົງການກວດກາລັດຖະບານ, ອົງການປົກຄອງແຂວງ, ນະຄອນ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ຂອງຕົນ ແລ້ວຈັດຕັ້ງປະຕິບັດ;
2. ໂຄສະນາເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານກວດກາ;
3. ຊີ້ນຳ, ກວດກາການຈັດຕັ້ງປະຕິບັດວຽກງານກວດກາລັດ ຂອງຂັ້ນລຸ່ມ;
4. ບຳລຸງ, ຍົກລະດັບວຽກງານກວດກາ ໃຫ້ຖັນແຖວພະນັກງານ, ລັດຖະກອນ ທີ່ເຮັດວຽກງານກວດກາລັດ;
5. ກວດກາການປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ສິດ ໜ້າທີ່, ຄວາມຮັບຜິດຊອບຂອງພະແນກການອ້ອມແຂວງ, ນະຄອນ, ເມືອງ, ເທດສະບານ ແລະ ພະນັກງານບໍລິຫານຂັ້ນແຂວງຄຸ້ມຄອງ;
6. ກວດກາວຽກງານ ທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍພະແນກການ, ຫຼາຍເມືອງ, ເທດສະບານ ທີ່ຂຶ້ນກັບອົງການປົກຄອງແຂວງ, ນະຄອນ;
7. ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ກ່ຽວກັບການກະທຳ ຫຼື ການຕົກລົງບັນຫາໃດໜຶ່ງ ທີ່ລະເມີດລະບຽບກົດໝາຍ ຂອງການຈັດຕັ້ງ ຫຼື ພະນັກງານ ບໍລິຫານຂັ້ນແຂວງ

ຄຸ້ມຄອງ; ຄົ້ນຄວ້າ, ພິຈາລະນາຄຳສະເໜີ ຂອງພົນລະເມືອງ ທີ່ພະ ແນກການອ້ອມຂ້າງ ແຂວງ, ນະຄອນ, ເມືອງ, ເທດສະບານ ໄດ້ແກ້ໄຂແລ້ວ ແຕ່ພົນລະເມືອງຜູ້ນັ້ນເຫັນວ່າຍັງບໍ່ເໝາະສົມ;

8. ປະຕິບັດສິດ ໜ້າທີ່ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
9. ພົວພັນ ແລະ ປະສານສົມທົບກັບ ບັນດາອົງການຈັດຕັ້ງຂອງລັດ ຂັ້ນແຂວງ ແລະ ຂັ້ນເມືອງ ລວມທັງອົງການທີ່ຮັບຜິດຊອບ ກ່ຽວກັບການກວດສອບແຫ່ງລັດ ແລະ ກວດສອບເອກະລາດ ກ່ຽວກັບການດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;
10. ສະເໜີ ມາດຕະການ, ວິທີການ ແກ້ໄຂຜົນຂອງການກວດກາລັດ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຖັດຕົນ;
11. ຮ່ວມມືກັບສາກົນ ກ່ຽວກັບວຽກງານກວດກາລັດ ຕາມການຕົກລົງຂອງຂັ້ນເທິງ;
12. ສະຫຼຸບສັງລວມ, ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ແລະ ຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງແຂວງ, ນະຄອນ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນ, ປະທານອົງການກວດກາລັດຖະບານ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຢ່າງເປັນປົກກະຕິ;
13. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ, ປະທານອົງການກວດກາລັດຖະບານ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 35. ໂຄງປະກອບ**

ໂຄງປະກອບ ບຸກຄະລາກອນ ຂອງພະແນກກວດກາລັດ ແຂວງ, ນະຄອນ ມີດັ່ງນີ້ :

- ຫົວໜ້າ;
- ຮອງຫົວໜ້າ ຈຳນວນໜຶ່ງ;
- ພະນັກງານວິຊາການ.

ສຳລັບໂຄງປະກອບການຈັດຕັ້ງ ຂອງພະແນກກວດກາລັດ ແຂວງ, ນະຄອນ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 36. ຫົວໜ້າພະແນກກວດກາລັດແຂວງ, ນະຄອນ**

ຫົວໜ້າພະແນກກວດກາລັດ ແຂວງ, ນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານອົງການກວດກາລັດຖະບານ ຕາມການສະເໜີ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ.

ຫົວໜ້າພະແນກກວດກາລັດ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຜັນຂະຫຍາຍ ມະຕິກອງປະຊຸມວຽກງານກວດກາທົ່ວປະເທດ, ມະຕິກອງປະຊຸມຂອງອົງການປົກຄອງ ແຂວງ, ນະຄອນ ມາເປັນແຜນການ, ໂຄງການ ຂອງຕົນ ແລະ ຈັດຕັ້ງປະຕິບັດ;
2. ຊີ້ນຳ, ນຳພາ ແລະ ກວດກາການຈັດຕັ້ງປະຕິບັດວຽກງານກວດກາລັດ ໃນຂອບເຂດແຂວງ, ນະຄອນ ແລະ ເມືອງ, ເທດສະບານ;

3. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ ເພື່ອເພີ່ມປະສິດທິພາບ ໃນການຈັດຕັ້ງ ແລະ ເຄື່ອນໄຫວການກວດກາລັດ ແຕ່ແຂວງ, ນະຄອນ ລົງຮອດເມືອງ, ເທດສະບານ;
4. ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ຫຼື ນິຕິກໍາອື່ນ ຂອງອົງການກວດກາລັດຂັ້ນລຸ່ມ ທີ່ຂັດກັບລະບຽບກົດໝາຍ ຫຼື ຂັດກັບນິຕິກໍາ ຂອງອົງການກວດກາຂັ້ນເທິງ;
5. ປະສານສົມທົບກັບ ອົງການໄອຍະການປະຊາຊົນແຂວງ, ນະຄອນ ເພື່ອສະເໜີຕໍ່ຫົວໜ້າພະແນກການອ້ອມຂ້າງແຂວງ, ນະຄອນ, ເຈົ້າເມືອງ, ຫົວໜ້າເທດສະບານ ງົດການຈັດຕັ້ງປະຕິບັດ, ລົບລ້າງ ຫຼື ຍົກເລີກນິຕິກໍາ ຂອງຫົວໜ້າອົງການດັ່ງກ່າວ ທີ່ຂັດກັບລະບຽບກົດໝາຍ; ໃນກໍລະນີທີ່ບໍ່ປະຕິບັດຕາມການສະເໜີນັ້ນ ແມ່ນມີສິດສະເໜີຕໍ່ ເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອພິຈາລະນາ ແລະ ລາຍງານ ໃຫ້ປະທານອົງການກວດກາລັດຖະບານ;
6. ຕົກລົງດໍາເນີນການກວດກາລັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ໃນກໍລະນີທີ່ມີຄວາມສໍາຄັນ ຕ້ອງສະເໜີເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອພິຈາລະນາ;
7. ສະເໜີໃຫ້ຫົວໜ້າພະແນກການອ້ອມຂ້າງແຂວງ, ນະຄອນ, ເຈົ້າເມືອງ, ຫົວໜ້າເທດສະບານ ດໍາເນີນການກວດກາ ໃນຂອບເຂດການຄຸ້ມຄອງຂອງຕົນ;
8. ສະເໜີໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງຕົນ; ໃນກໍລະນີທີ່ບໍ່ພິຈາລະນາ ຫຼື ໄດ້ພິຈາລະນາແລ້ວ ແຕ່ເຫັນວ່າຍັງບໍ່ເໝາະສົມ ກໍມີສິດລາຍງານ ຕໍ່ປະທານອົງການກວດກາລັດຖະບານ ເພື່ອພິຈາລະນາ;
9. ພິຈາລະນາບັນຫາ ທີ່ຫົວໜ້າຂະແໜງກວດກາລັດ ຂອງພະແນກການ ບໍ່ເປັນເອກະພາບກັບຫົວໜ້າພະແນກ ແລະ ຫົວໜ້າຫ້ອງການກວດກາລັດເມືອງ, ເທດສະບານ ບໍ່ເປັນເອກະພາບກັບເຈົ້າເມືອງ, ຫົວໜ້າເທດສະບານ ກ່ຽວກັບວຽກງານກວດກາລັດ ແມ່ນສະເໜີໃຫ້ພິຈາລະນາຄືນໃໝ່; ໃນກໍລະນີທີ່ບໍ່ພິຈາລະນາຄືນ ຫຼື ໄດ້ພິຈາລະນາແລ້ວ ແຕ່ເຫັນວ່າຍັງບໍ່ທັນເໝາະສົມ ແມ່ນມີສິດລາຍງານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອພິຈາລະນາຕົກລົງ;
10. ພົວພັນຮ່ວມມືກັບຕ່າງປະເທດ ຕາມການຕົກລົງຂອງຂັ້ນເທິງ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 37. ຮອງຫົວໜ້າພະແນກກວດກາລັດ ແຂວງ, ນະຄອນ**

ຮອງຫົວໜ້າພະແນກກວດກາລັດ ແຂວງ, ນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານອົງການກວດກາລັດຖະບານ ຕາມການສະເໜີ ຂອງເຈົ້າແຂວງ, ເຈົ້າຄອງນະຄອນ.

ຮອງຫົວໜ້າພະແນກກວດກາລັດ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ຊ່ວຍວຽກຫົວໜ້າພະແນກກວດກາລັດ ແຂວງ, ນະຄອນ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ. ໃນກໍລະນີທີ່ຫົວໜ້າບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງຫົວໜ້າ ຜູ້ທີ່ໄດ້ຮັບມອບໝາຍຈາກຫົວໜ້າ ເປັນຜູ້ວ່າການແທນ.

### ຄ. ຫ້ອງການກວດກາລັດເມືອງ, ເທດສະບານ

**ມາດຕາ 38. ທີ່ຕັ້ງ ແລະ ພາລະບົດບາດ**

ຫ້ອງການກວດກາລັດເມືອງ, ເທດສະບານ ແມ່ນການຈັດຕັ້ງໃນໂຄງປະກອບກົງຈັກ ຂອງອົງການປົກຄອງເມືອງ, ເທດສະບານ, ມີພາລະບົດບາດເປັນເສນາທິການ ໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ ກ່ຽວກັບການກວດກາລັດ, ການຄົ້ນຄວ້າ, ພິຈາລະນາ ຄຳສະເໜີຂອງພົນລະເມືອງ ໃນຂອບເຂດສິດ, ໜ້າທີ່ ຂອງອົງການປົກຄອງເມືອງ, ເທດສະບານ.

ຫ້ອງການກວດກາລັດ ເມືອງ, ເທດສະບານ ເຄື່ອນໄຫວວຽກງານ ພາຍໃຕ້ການຊີ້ນຳດ້ານວິຊາສະເພາະ ຂອງພະແນກກວດກາລັດ ແຂວງ, ນະຄອນ.

**ມາດຕາ 39. ສິດ ແລະ ໜ້າທີ່**

ຫ້ອງການກວດກາລັດເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ມະຕິ, ຄຳສັ່ງ ຂອງອົງການກວດກາລັດຂັ້ນເທິງ ກ່ຽວກັບວຽກງານກວດກາ;
2. ໂຄສະນາເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານກວດກາ;
3. ກວດກາການປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ສິດ ໜ້າທີ່, ຄວາມຮັບຜິດຊອບ ຂອງຫ້ອງການອ້ອມຂ້າງເມືອງ, ເທດສະບານ, ບ້ານ ແລະ ພະນັກງານບໍລິຫານຂັ້ນເມືອງຄຸ້ມຄອງ;
4. ກວດກາວຽກງານ ທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍຫ້ອງການ, ຫຼາຍບ້ານ ທີ່ຂຶ້ນກັບການຄຸ້ມຄອງຂອງອົງການປົກຄອງເມືອງ, ເທດສະບານ;
5. ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ກ່ຽວກັບການກະທຳ ຫຼື ການຕົກລົງບັນຫາໃດໜຶ່ງ ທີ່ລະເມີດລະບຽບກົດໝາຍ ຂອງການຈັດຕັ້ງ ຫຼື ພະນັກງານ ບໍລິຫານຂັ້ນເມືອງຄຸ້ມຄອງ; ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ທີ່ຫ້ອງການອ້ອມຂ້າງເມືອງ, ເທດສະບານ ຫຼື ບ້ານ ໄດ້ແກ້ໄຂແລ້ວ ແຕ່ພົນລະເມືອງຜູ້ນັ້ນເຫັນວ່າຍັງບໍ່ເໝາະສົມ;
6. ພົວພັນ ແລະ ປະສານສົມທົບກັບ ບັນດາອົງການຈັດຕັ້ງຂອງລັດ ຂັ້ນເມືອງ ແລະ ບ້ານ ກ່ຽວກັບການດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນ ຂອງການກວດກາ ຕາມພາລະບົດບາດຂອງຕົນ;
7. ສະເໜີມາດຕະການ, ວິທີການ ແກ້ໄຂຜົນຂອງການກວດກາລັດ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຖັດຕົນ;
8. ສະຫຼຸບສັງລວມ, ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ແລະ ຜົນຂອງການກວດກາໃນຂອບເຂດການຄຸ້ມຄອງຂອງເມືອງ, ເທດສະບານ ໃຫ້ຫົວໜ້າພະແນກກວດກາລັດຂັ້ນແຂວງ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ ຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງເຈົ້າເມືອງ, ຫົວໜ້າເທດສະບານ, ຫົວໜ້າພະແນກກວດກາລັດແຂວງ, ນະຄອນ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 40. ໂຄງປະກອບ**

ໂຄງປະກອບບຸກຄະລາກອນ ຂອງຫ້ອງການກວດກາລັດເມືອງ, ເທດສະບານ ມີດັ່ງນີ້:

- ຫົວໜ້າ;
- ຮອງຫົວໜ້າ ຈຳນວນໜຶ່ງ;
- ພະນັກງານວິຊາການ.

ສຳລັບໂຄງປະກອບການຈັດຕັ້ງ ຂອງຫ້ອງການກວດກາລັດເມືອງ, ເທດສະບານ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 41. ຫົວໜ້າຫ້ອງການກວດກາລັດເມືອງ, ເທດສະບານ**

ຫົວໜ້າຫ້ອງການກວດກາລັດເມືອງ, ເທດສະບານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານອົງການກວດກາລັດຖະບານ ຕາມການສະເໜີ ຂອງເຈົ້າເມືອງ, ຫົວໜ້າເທດສະບານ.

ຫົວໜ້າຫ້ອງການກວດກາລັດເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນການ, ໂຄງການ ກ່ຽວກັບວຽກງານກວດກາ;
2. ຊີ້ນຳ, ກວດກາການຈັດຕັ້ງປະຕິບັດວຽກງານກວດກາລັດຂັ້ນຂອງຕົນ;
3. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ ເພື່ອເພີ່ມປະສິດທິພາບໃນການຈັດຕັ້ງ ແລະ ເຄື່ອນໄຫວການກວດກາລັດ ແຕ່ເມືອງ, ເທດສະບານ ລົງຮອດ ບ້ານ;
4. ປະສານສົມທົບກັບອົງການໄອຍະການປະຊາຊົນເມືອງ, ເທດສະບານ ເພື່ອສະເໜີຕໍ່ຫົວໜ້າຫ້ອງການອ້ອມຂ້າງເມືອງ, ເທດສະບານ ແລະ ບ້ານ ງົດການຈັດຕັ້ງປະຕິບັດ, ລົບລ້າງ ຫຼື ຍົກເລີກ ນິຕິກຳຂອງຫົວໜ້າຫ້ອງການ ແລະ ບ້ານ ດັ່ງກ່າວ ທີ່ຂັດກັບລະບຽບກົດໝາຍ; ໃນກໍລະນີທີ່ບໍ່ປະຕິບັດຕາມການສະເໜີນັ້ນ ແມ່ນມີສິດສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ ເພື່ອພິຈາລະນາຕົກລົງ ແລະ ລາຍງານ ໃຫ້ຫົວໜ້າພະແນກກວດກາລັດ ຂັ້ນແຂວງ;
5. ຕົກລົງດຳເນີນການກວດກາລັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ໃນກໍລະນີທີ່ມີຄວາມສຳຄັນ ຕ້ອງສະເໜີເຈົ້າເມືອງ, ຫົວໜ້າເທດສະບານ ເພື່ອພິຈາລະນາ;
6. ສະເໜີໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາໃນຂອບເຂດການຄຸ້ມຄອງຂອງຕົນ; ໃນກໍລະນີທີ່ບໍ່ພິຈາລະນາ ຫຼື ໄດ້ ພິຈາລະນາແລ້ວ ແຕ່ເຫັນວ່າຍັງບໍ່ເໝາະສົມ ກໍມີສິດລາຍງານ ຕໍ່ຫົວໜ້າພະແນກກວດ ກາລັດຂັ້ນແຂວງ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງເຈົ້າເມືອງ, ຫົວໜ້າເທດສະບານ, ຫົວໜ້າພະແນກກວດກາລັດແຂວງ, ນະຄອນ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 42. ຮອງຫົວໜ້າຫ້ອງການກວດກາລັດເມືອງ, ເທດສະບານ**

ຮອງຫົວໜ້າຫ້ອງການກວດກາລັດເມືອງ, ເທດສະບານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນ ຕາມການສະເໜີຂອງເຈົ້າເມືອງ, ຫົວໜ້າເທດສະບານ.

ຮອງຫົວໜ້າຫ້ອງການກວດກາລັດເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ຊ່ວຍວຽກຫົວໜ້າຫ້ອງການກວດກາລັດເມືອງ, ເທດສະບານ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ

ຂອງຫົວໜ້າ. ໃນກໍລະນີທີ່ຫົວໜ້າບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງຫົວໜ້າຜູ້ທີ່ໄດ້ຮັບມອບໝາຍ ຈາກຫົວໜ້າເປັນຜູ້ວ່າການແທນ.

## ໝວດທີ 3
## ອົງການກວດກາລັດ ຕາມຂະແໜງການ

### ກ. ກົມກວດກາລັດ ກະຊວງ, ອົງການທຽບເທົ່າກະຊວງ

**ມາດຕາ 43. ທີ່ຕັ້ງ ແລະ ພາລະບົດບາດ**

ກົມກວດກາລັດ ກະຊວງ, ອົງການທຽບເທົ່າກະຊວງ ແມ່ນການຈັດຕັ້ງວິຊາສະເພາະ ກ່ຽວກັບວຽກງານກວດກາ ຊຶ່ງຂຶ້ນກັບການຄຸ້ມຄອງ ແລະ ຊີ້ນຳ ຂອງລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ມີພາລະບົດບາດ ໃນການກວດກາຂະແໜງການ ແລະ ການບໍລິຫານ ກ່ຽວກັບການປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ວິຊາສະເພາະ, ເຕັກນິກຂອງການຈັດຕັ້ງ ແລະ ພະນັກງານ, ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງອົງການດັ່ງກ່າວ.

ກົມກວດກາລັດ ກະຊວງ, ອົງການທຽບເທົ່າກະຊວງ ເຄື່ອນໄຫວວຽກງານ ພາຍໃຕ້ການຊີ້ນຳດ້ານວິຊາສະເພາະ ຂອງອົງການກວດກາລັດຖະບານ.

**ມາດຕາ 44. ສິດ ແລະ ໜ້າທີ່**

ກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຄົ້ນຄວ້າຫັນເອົາມະຕິກອງປະຊຸມວຽກງານກວດກາລັດທົ່ວປະເທດ, ນະໂຍບາຍ, ແຜນການຂອງກະຊວງ, ອົງການທຽບເທົ່າກະຊວງ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ສະເໜີລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ພິຈາລະນາຕົກລົງ ແລະ ຈັດຕັ້ງປະຕິບັດ;
2. ສະເໜີລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ອອກລະບຽບການ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານກວດກາລັດ ຕາມຂະແໜງການ ແລະ ຂະແໜງກວດກາຂັ້ນລຸ່ມຂອງຕົນ;
3. ກວດກາການປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ສິດ ໜ້າທີ່, ຄວາມຮັບຜິດຊອບຂອງການຈັດຕັ້ງ, ພະນັກງານ, ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງ ຂອງກະຊວງ, ອົງການທຽບເທົ່າກະຊວງ;
4. ກວດກາວຽກງານ ທີ່ພົວພັນເຖິງຄວາມຮັບຜິດຊອບ ຂອງຫຼາຍກົມ, ຫຼາຍຫົວໜ່ວຍທຸລະກິດທີ່ຂຶ້ນກັບການຄຸ້ມຄອງ ຂອງກະຊວງ, ອົງການທຽບເທົ່າກະຊວງ ແລະ ວຽກງານຂອງຂະແໜງກວດກາລັດ ຂອງຫຼາຍພະແນກການອ້ອມຂ້າງແຂວງ, ນະຄອນ;
5. ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ກ່ຽວກັບການກະທຳ ຫຼື ການຕົກລົງບັນຫາໃດໜຶ່ງ ຂອງການຈັດຕັ້ງ ແລະ ພະນັກງານ, ລັດຖະກອນ ທີ່ຂຶ້ນກັບກະຊວງ, ອົງການທຽບເທົ່າກະຊວງ ທີ່ເຫັນວ່າລະເມີດລະບຽບກົດໝາຍ; ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງ

ພົນລະເມືອງ ທີ່ພະແນກການສາຍຕັ້ງຂັ້ນລຸ່ມ ຂອງອົງການດັ່ງກ່າວ ໄດ້ແກ້ໄຂແລ້ວ ແຕ່ພົນລະເມືອງຜູ້ນັ້ນເຫັນວ່າຍັງບໍ່ເໝາະສົມ;

6. ສະຫຼຸບສັງລວມ, ລາຍງານ ການເຄື່ອນໄຫວວຽກງານກວດກາ ແລະ ຜົນຂອງການກວດກາ, ການຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ໃນຂອບເຂດການຄຸ້ມຄອງ ຂອງກະຊວງ, ອົງການທຽບເທົ່າກະຊວງ ໃຫ້ລັດຖະມົນຕີ, ຫົວໜ້າອົງການ ທຽບເທົ່າກະຊວງ ແລະ ປະທານອົງການກວດກາລັດຖະບານ;
7. ປະສານສົມທົບ ກັບບັນດາກົມອື່ນພາຍໃນກະຊວງ, ອົງການທຽບເທົ່າກະຊວງ ໃນການກຳນົດແຜນການດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;
8. ສະເໜີມາດຕະການ, ວິທີການ ແກ້ໄຂຜົນຂອງການກວດກາລັດ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 45. ໂຄງປະກອບ**

ໂຄງປະກອບບຸກຄະລາກອນ ຂອງກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ ມີດັ່ງນີ້ :

- ຫົວໜ້າ;
- ຮອງຫົວໜ້າ ຈຳນວນໜຶ່ງ;
- ພະນັກງານວິຊາການ.

ໂຄງປະກອບກົມກວດກາລັດ ກະຊວງ, ອົງການທຽບເທົ່າກະຊວງ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 46. ຫົວໜ້າກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ**

ຫົວໜ້າກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ພາຍຫຼັງທີ່ມີການປະສານສົມທົບກັບປະທານອົງການກວດກາລັດຖະບານ.

ຫົວໜ້າກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຜັນຂະຫຍາຍມະຕິກອງປະຊຸມວຽກງານກວດກາທົ່ວປະເທດ, ມະຕິກອງປະຊຸມຂອງກະຊວງ, ອົງການທຽບເທົ່າກະຊວງ ມາເປັນແຜນການ, ໂຄງການ ຂອງຕົນ ແລະ ຈັດຕັ້ງປະຕິບັດ;
2. ຊີ້ນຳວຽກງານກວດກາລັດ ໃນຂອບເຂດການຄຸ້ມຄອງຂອງກະຊວງ, ອົງການທຽບເທົ່າກະຊວງ ແລະ ກວດກາການປະຕິບັດວຽກງານ ຂອງຂະແໜງການຕົນ;
3. ອອກຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ ໃຫ້ຂະແໜງການຂອງຕົນ;
4. ດຳເນີນການກວດກາ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ, ໃນກໍລະນີທີ່ມີຄວາມສຳຄັນ ຕ້ອງສະເໜີລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ເພື່ອພິຈາລະນາຕົກລົງ;

5. ສະເໜີຕໍ່ຫົວໜ້າກົມອື່ນ ພາຍໃນກະຊວງ, ອົງການທຽບເທົ່າກະຊວງ ຫຼື ພະແນກການສາຍຕັ້ງຂັ້ນລຸ່ມ ຂອງອົງການດັ່ງກ່າວ ໂຈະການປະຕິບັດ, ລົບລ້າງ ຫຼື ຍົກເລີກ ນິຕິກຳຂອງຕົນທີ່ຂັດກັບລະບຽບກົດໝາຍ; ໃນກໍລະນີທີ່ບໍ່ປະຕິບັດຕາມການສະເໜີນັ້ນ ກໍມີສິດສະເໜີລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ພິຈາລະນາ;
6. ສະເໜີສ້າງ ຫຼື ປັບປຸງ ກົດໝາຍ, ດຳລັດ, ລະບຽບການ ກ່ຽວກັບວຽກງານກວດກາລັດ ຕໍ່ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ;
7. ແນະນຳໃຫ້ຫົວໜ້າຂະແໜງກວດກາລັດຂັ້ນລຸ່ມ ດຳເນີນການກວດກາລັດ ໃນຂອບເຂດຄວາມ ຮັບຜິດຊອບ ຂອງຕົນ;
8. ສະເໜີໃຫ້ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ພິຈາລະນາຕົກ ລົງແກ້ໄຂຜົນຂອງການກວດກາ, ໃນກໍລະນີທີ່ຄຳສະເໜີດັ່ງກ່າວ ບໍ່ໄດ້ຮັບການພິຈາລະນາ ຫຼື ໄດ້ພິຈາລະນາແລ້ວ ແຕ່ເຫັນວ່າຍັງບໍ່ເໝາະສົມ ແມ່ນມີສິດລາຍງານຕໍ່ປະທານ ອົງການກວດກາລັດຖະບານ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 47. ຮອງຫົວໜ້າກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ**

ຮອງຫົວໜ້າກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ຕາມການສະເໜີຂອງຫົວໜ້າກົມຈັດຕັ້ງຂອງກະຊວງ, ອົງການທຽບເທົ່າກະຊວງ ພາຍຫຼັງທີ່ມີການປະສານສົມທົບກັບຫົວໜ້າກົມກວດກາລັດ ຂອງອົງການດັ່ງກ່າວ.

ຮອງຫົວໜ້າກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ ມີສິດ ແລະ ໜ້າທີ່ ຊ່ວຍວຽກຫົວໜ້າກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ. ໃນກໍລະນີທີ່ຫົວໜ້າບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງຫົວໜ້າຜູ້ທີ່ໄດ້ຮັບມອບໝາຍ ຈາກຫົວໜ້າເປັນຜູ້ວ່າການແທນ.

## ຂ. ຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ

**ມາດຕາ 48. ທີ່ຕັ້ງ ແລະ ພາລະບົດບາດ**

ຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ ແມ່ນການຈັດຕັ້ງວິຊາສະເພາະ ກ່ຽວກັບວຽກງານກວດກາລັດ ຕາມຂະແໜງການ ຊຶ່ງຂຶ້ນກັບການຄຸ້ມຄອງ ແລະ ຊີ້ນຳ ຂອງຫົວໜ້າພະແນກການດັ່ງກ່າວ, ມີພາລະບົດບາດຊ່ວຍຫົວໜ້າພະແນກ ໃນການກວດກາຂະແໜງການ ແລະ ການບໍລິຫານ ກ່ຽວກັບການປະຕິບັດນະ ໂຍບາຍ, ລະບຽບກົດໝາຍ, ວິຊາສະເພາະ, ເຕັກນິກ ຂອງການຈັດຕັ້ງ ແລະ ພະນັກງານ, ລັດຖະກອນ ທີ່ຂຶ້ນກັບການຄຸ້ມຄອງຂອງພະແນກການນັ້ນ.

ຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ ເຄື່ອນໄຫວວຽກງານ ພາຍໃຕ້ການຊີ້ນຳດ້ານວິຊາສະເພາະ ຂອງພະແນກກວດກາລັດແຂວງ, ນະຄອນ.

### ມາດຕາ 49. ສິດ ແລະ ໜ້າທີ່

ຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ມະຕິ, ຄຳສັ່ງ ຂອງອົງການກວດກາລັດຂັ້ນເທິງ ກ່ຽວກັບວຽກງານກວດກາລັດຕາມຂະແໜງການ ແລະ ການບໍລິຫານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ໂຄສະນາເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານກວດກາລັດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
3. ກວດກາການປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ສິດ ໜ້າທີ່, ຄວາມຮັບຜິດຊອບ ຂອງການຈັດຕັ້ງ, ພະນັກງານ, ລັດຖະກອນ ພາຍໃນພະແນກການ ຂອງຕົນ ແລະ ຫ້ອງການຂັ້ນເມືອງ ຕາມສາຍຕັ້ງ;
4. ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ກ່ຽວກັບການກະທຳ ຫຼື ການຕົກລົງບັນຫາໃດໜຶ່ງ ທີ່ລະເມີດລະບຽບກົດໝາຍ ຂອງການຈັດຕັ້ງ ຫຼື ພະນັກງານບໍລິຫານ ພາຍໃນພະແນກການຂອງຕົນ; ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ທີ່ຫ້ອງການຂັ້ນເມືອງ ຕາມສາຍຕັ້ງ ໄດ້ແກ້ໄຂແລ້ວ ແຕ່ພົນລະເມືອງຜູ້ນັ້ນເຫັນວ່າຍັງບໍ່ເໝາະສົມ;
5. ພົວພັນ ແລະ ປະສານສົມທົບ ກັບບັນດາຂະແໜງການພາຍໃນພະແນກ ແລະ ຫ້ອງການຂັ້ນເມືອງຕາມສາຍຕັ້ງ ເພື່ອດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;
6. ສະເໜີ ມາດຕະການ, ວິທີການ ແກ້ໄຂຜົນຂອງການກວດກາລັດ ໃຫ້ຫົວໜ້າພະແນກຂອງຕົນ ແລະ ຫົວໜ້າຫ້ອງການຂັ້ນເມືອງ ຕາມສາຍຕັ້ງ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ;
7. ສະຫຼຸບສັງລວມ, ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ແລະ ຜົນຂອງການກວດກາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ຫົວໜ້າພະແນກການ, ຫົວໜ້າກົມກວດກາຂອງຂະແໜງການຕົນ ແລະ ຫົວໜ້າພະແນກກວດກາລັດແຂວງ, ນະຄອນ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງຫົວໜ້າພະແນກການ, ຫົວໜ້າກົມກວດກາຂອງຂະແໜງການທີ່ກ່ຽວຂ້ອງ, ຫົວໜ້າພະແນກກວດກາລັດ ແຂວງ, ນະຄອນ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 50. ໂຄງປະກອບ

ໂຄງປະກອບບຸກຄະລາກອນ ຂອງຂະແໜງກວດກາລັດ ຂອງພະແນກການອ້ອມ ຂ້າງແຂວງ, ນະຄອນ ມີດັ່ງນີ້ :

- ຫົວໜ້າ;
- ຮອງຫົວໜ້າ ຈຳນວນໜຶ່ງ;
- ພະນັກງານວິຊາການ.

ໂຄງປະກອບຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 51. ຫົວໜ້າຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ**

ຫົວໜ້າຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ຕາມການສະເໜີຂອງຫົວໜ້າກົມຈັດຕັ້ງຂອງອົງການດັ່ງກ່າວ ພາຍຫຼັງທີ່ມີການປະສານສົມທົບກັບ ຫົວໜ້າພະແນກການອ້ອມຂ້າງແຂວງ, ນະຄອນ ທີ່ກ່ຽວຂ້ອງ.

ຫົວໜ້າຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນການ, ໂຄງການ ກ່ຽວກັບວຽກງານກວດກາລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຊີ້ນຳ, ກວດກາການຈັດຕັ້ງປະຕິບັດວຽກງານກວດກາລັດ ໃນຂະແໜງຂອງຕົນ;
3. ອອກຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ ເພື່ອເພີ່ມປະສິດທິພາບໃນການຈັດຕັ້ງ ແລະ ເຄື່ອນໄຫວການກວດກາລັດ ທີ່ຕົນຮັບຜິດຊອບ;
4. ດຳເນີນການກວດກາລັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ໃນກໍລະນີທີ່ມີຄວາມສຳຄັນ ຕ້ອງສະເໜີຫົວໜ້າພະແນກການ ເພື່ອພິຈາລະນາ;
5. ສະເໜີໃຫ້ຫົວໜ້າພະແນກ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງຕົນ; ໃນກໍລະນີທີ່ບໍ່ພິຈາລະນາ ຫຼື ໄດ້ພິຈາລະນາແລ້ວ ແຕ່ເຫັນວ່າຍັງບໍ່ເໝາະສົມ ແມ່ນມີສິດລາຍງານ ຕໍ່ຫົວໜ້າກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ ຂອງຫົວໜ້າພະແນກຕົນ, ຫົວໜ້າກົມກວດກາລັດກະຊວງ, ອົງການທຽບເທົ່າກະຊວງ, ຫົວໜ້າພະແນກກວດກາລັດແຂວງ, ນະຄອນ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 52. ຮອງຫົວໜ້າຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ**

ຮອງຫົວໜ້າຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນ ຕາມການສະເໜີຂອງຫົວໜ້າຄະນະຈັດຕັ້ງແຂວງ, ນະຄອນ ພາຍຫຼັງທີ່ມີການປະສານສົມທົບກັບຫົວໜ້າພະແນກການອ້ອມຂ້າງແຂວງ, ນະຄອນ ທີ່ກ່ຽວຂ້ອງ.

ຮອງຫົວໜ້າຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ຊ່ວຍວຽກຫົວໜ້າຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງ ແຂວງ, ນະຄອນ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ; ໃນກໍລະນີທີ່ຫົວໜ້າບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງຫົວໜ້າຜູ້ທີ່ໄດ້ຮັບມອບໝາຍ ຈາກຫົວໜ້າເປັນຜູ້ວ່າການແທນ.

**ມາດຕາ 53. ການກວດກາຕາມຂະແໜງການ ຂັ້ນເມືອງ**

ໃນກໍລະນີທີ່ຈຳເປັນ ບາງຂະແໜງການ ຈະສ້າງການຈັດຕັ້ງກວດກາລັດ ຢູ່ຫ້ອງການຂັ້ນເມືອງກໍໄດ້ ເພື່ອຮັບປະກັນວຽກງານກວດກາ ຢູ່ຂັ້ນພື້ນຖານ.

# ໝວດທີ 4

## ຄະນະກວດກາ ແລະ ຄະນະກວດກາສະເພາະກິດ

**ມາດຕາ 54. ການແຕ່ງຕັ້ງຄະນະກວດກາ**

ເພື່ອດຳເນີນການກວດກາແຕ່ລະຄັ້ງ ຫົວໜ້າອົງການກວດກາລັດ ຕາມຂັ້ນບໍລິຫານການປົກຄອງ ແລະ ຕາມຂະແໜງການ ແຕ່ງຕັ້ງຄະນະກວດກາຂັ້ນຂອງຕົນ.

ຄະນະກວດກາ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານວິຊາການ ຈຳນວນໜຶ່ງ.

**ມາດຕາ 55. ສິດ ແລະ ໜ້າທີ່ ຂອງຄະນະກວດກາ**

ຄະນະກວດກາ ມີສິດ ແລະ ໜ້າທີ່ ໃນການກະກຽມ, ການດຳເນີນການກວດກາ, ການສະຫຼຸບ ແລະ ລາຍງານຜົນຂອງການກວດກາ; ສະເໜີ ແລະ ຕິດຕາມ ການແກ້ໄຂຜົນຂອງການກວດກາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 56. ສິດ ແລະ ໜ້າທີ່ ຂອງຫົວໜ້າຄະນະກວດກາ**

ຫົວໜ້າຄະນະກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງ, ຊີ້ນຳສະມາຊິກ ໃນຄະນະກວດກາ ປະຕິບັດໃຫ້ຖືກຕ້ອງ ຕາມຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນ ແລະ ກຳນົດເວລາຂອງການກວດກາ;
2. ສະເໜີຄຳເຫັນຕໍ່ຜູ້ອອກຂໍ້ຕົກລົງກວດກາ ນຳໃຊ້ມາດຕະການ ເພື່ອຮັບປະກັນການປະຕິບັດໜ້າທີ່ ຂອງຄະນະກວດກາ;
3. ສະເໜີໃຫ້ເປົ້າໝາຍຖືກກວດກາ ຕ້ອງສະໜອງຂໍ້ມູນ, ເອກະສານ, ລາຍງານເປັນລາຍລັກອັກສອນ, ອະທິບາຍ ກ່ຽວກັບບັນຫາທີ່ພົວພັນກັບເນື້ອໃນກວດກາ, ໃນກໍລະນີທີ່ຈຳເປັນ ອາດຈະດຳເນີນການກວດກາ ແລະ ຂຶ້ນບັນຊີຊັບສິນ ຂອງເປົ້າໝາຍຖືກກວດກາ;
4. ສະເໜີໃຫ້ສຳນັກງານ, ອົງການຈັດຕັ້ງ, ບຸກຄົນ ທີ່ມີຂໍ້ມູນຂ່າວສານ, ເອກະສານ ພົວພັນກັບເນື້ອໃນຂອງການກວດກາ ຕ້ອງສະໜອງຂໍ້ມູນ, ເອກະສານ ດັ່ງກ່າວ;
5. ຕົກລົງຢຶດ ຫຼື ອາຍັດເອກະສານ ຂອງເປົ້າໝາຍຖືກກວດກາ ເມື່ອມີຫຼັກຖານຢັ້ງຢືນວ່າມີການກະທຳຜິດ ຫຼື ລະເມີດກົດໝາຍ ເພື່ອປ້ອງກັນບໍ່ໃຫ້ມີການປອມແປງ ຫຼື ທຳລາຍເອກະສານ, ຫຼັກຖານ;
6. ສະເໜີໃຫ້ຂັ້ນເທິງຂອງເປົ້າໝາຍຖືກກວດກາ ໂຈະການປະຕິບັດໜ້າທີ່ຊົ່ວຄາວ ເມື່ອເຫັນວ່າ ຜູ້ຖືກກວດກາຈະກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ແກ່ຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;
7. ສະເໜີໃຫ້ຂັ້ນເທິງຂອງເປົ້າໝາຍຖືກກວດກາ ໂຈະຊົ່ວຄາວ ການປະຕິບັດຂໍ້ຕົກລົງກ່ຽວກັບການຍົກຍ້າຍໜ້າທີ່, ຮັບບຳນານ ແລະອື່ນໆ ຕໍ່ຜູ້ຖືກກວດກາ ຫຼື ຜູ້ຮ່ວມງານກັບຄະນະກວດກາລັດ ເມື່ອເຫັນວ່າການປະຕິບັດຂໍ້ຕົກລົງດັ່ງກ່າວ ຈະເປັນການກີດຂວາງວຽກງານກວດກາລັດ;
8. ລາຍງານຕໍ່ຜູ້ອອກຂໍ້ຕົກລົງໃຫ້ກວດກາ ກ່ຽວກັບຜົນຂອງການກວດກາ ແລະ ຕ້ອງຮັບຜິດຊອບກ່ຽວກັບບົດລາຍງານດັ່ງກ່າວ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການຕົກລົງ ແລະ ຕາມລະບຽບກົດໝາຍ.

ຫົວໜ້າຄະນະກວດກາ ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບບັນຫາຕ່າງໆ ທີ່ຕົນໄດ້ຕົກລົງ.

**ມາດຕາ 57. ສິດ ແລະ ໜ້າທີ່ ຂອງສະມາຊິກຄະນະກວດກາ**

ສະມາຊິກ ຂອງຄະນະກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດວຽກງານ ຕາມການແບ່ງປັນ ຂອງຫົວໜ້າຄະນະ;
2. ສະຫຼຸບລາຍງານ ກ່ຽວກັບການເຄື່ອນໄຫວກວດກາ ໃຫ້ຫົວໜ້າຄະນະ;
3. ປະກອບຄຳຄິດຄຳເຫັນໃສ່ບົດສະຫຼຸບ, ບົດລາຍງານຜົນຂອງການກວດກາ;
4. ຮັບຜິດຊອບຕໍ່ໜ້າກົດໝາຍ ແລະ ຕໍ່ຫົວໜ້າຄະນະ ກ່ຽວກັບການປະຕິບັດໜ້າທີ່ຂອງຕົນໃນການກວດກາ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຫົວໜ້າຄະນະ ແລະ ຕາມລະບຽບກົດໝາຍ.

**ມາດຕາ 58. ການແຕ່ງຕັ້ງຄະນະກວດກາສະເພາະກິດ**

ເພື່ອດຳເນີນການກວດກາບັນຫາໃດໜຶ່ງ ທີ່ເຫັນວ່າ ມີຄວາມຫຍຸ້ງຍາກສັບສົນ ແລະ ພົວພັນເຖິງຫຼາຍພາກສ່ວນນັ້ນ ນາຍົກລັດຖະມົນຕີ, ປະທານອົງການກວດກາລັດຖະບານ, ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນ ຫຼື ເຈົ້າເມືອງ, ຫົວໜ້າເທດສະບານ ແຕ່ງຕັ້ງຄະນະກວດກາສະເພາະກິດຂຶ້ນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ຄະນະກວດກາສະເພາະກິດ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານວິຊາການຈຳນວນໜຶ່ງ.

ຄະນະກວດກາສະເພາະກິດ ຈະຖືກຍຸບເລີກ ພາຍຫຼັງທີ່ການຈັດຕັ້ງປະຕິບັດຜົນຂອງການກວດກາ ສິ້ນສຸດລົງ.

**ມາດຕາ 59. ສິດ ແລະ ໜ້າທີ່ ຂອງຄະນະກວດກາສະເພາະກິດ, ຫົວໜ້າ ແລະ ສະມາຊິກຄະນະກວດກາສະເພາະກິດ**

ຄະນະກວດກາສະເພາະກິດ, ຫົວໜ້າ ແລະ ສະມາຊິກຄະນະກວດກາສະເພາະກິດ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 55, 56 ແລະ 57 ຂອງກົດໝາຍສະບັບນີ້.

**ມາດຕາ 60. ມາດຕະຖານ ຂອງພະນັກງານກວດກາລັດ**

ພະນັກງານກວດກາລັດ ຕ້ອງມີມາດຕະຖານ ດັ່ງນີ້:

1. ມີຄວາມຈົງຮັກພັກດີ ຕໍ່ປະເທດຊາດ, ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສົມທຳປະຕິວັດ;
2. ກຳແໜ້ນແນວທາງນະໂຍບາຍ ແລະ ລະບຽບກົດໝາຍ;

3. ມີຄວາມຮັບຜິດຊອບສູງ, ກ້າຫານ, ເດັດຂາດ, ຄ່ອງແຄ້ວ ໃນການປະຕິບັດໜ້າທີ່ວຽກງານ, ມີຄວາມປອດໃສ, ມີຄວາມຍຸຕິທຳ, ຕັດສິນບັນຫາຢ່າງພາວະວິໄສ ແລະ ເປັນແບບຢ່າງໃນການປະຕິບັດລະບຽບກົດໝາຍ;
4. ມີຄວາມຮູ້, ຄວາມສາມາດ ກ່ຽວກັບວິຊາສະເພາະໃດໜຶ່ງ ໂດຍມີປະກາສະນີຍະບັດ ແຕ່ຊັ້ນກາງຂຶ້ນໄປ;
5. ໄດ້ຜ່ານການຮຳຮຽນ ຫຼື ການຝຶກອົບຮົມວຽກງານກວດກາລັດ;
6. ຮັກສາຄວາມລັບທາງດ້ານວິຊາສະເພາະ;
7. ບໍ່ເຄີຍຖືກປະຕິບັດວິໄນສະຖານໜັກ ຫຼື ບໍ່ເຄີຍລະເມີດທາງແພ່ງ ກ່ຽວກັບໜີ້ສິນ ຫຼື ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ກ່ຽວກັບພຶດຕິກຳ ທີ່ເປັນການສໍ້ລາດບັງຫຼວງ;
8. ມີສຸຂະພາບແຂງແຮງ.

## ພາກທີ V
## ພັນທະ ແລະ ສິດ ຂອງການຈັດຕັ້ງ ແລະ ບຸກຄົນ ທີ່ຖືກກວດກາ

**ມາດຕາ 61. ພັນທະ ຂອງການຈັດຕັ້ງ ແລະ ບຸກຄົນ ທີ່ຖືກກວດກາ**

ການຈັດຕັ້ງ ແລະ ບຸກຄົນ ທີ່ຖືກກວດກາ ມີພັນທະ ດັ່ງນີ້ :

1. ປະຕິບັດຂໍ້ຕົກລົງ ກ່ຽວກັບການກວດກາ, ໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນ, ເອກະສານຢ່າງຄົບຖ້ວນ, ຊັດເຈນ ແລະ ທັນເວລາ ຕາມການສະເໜີ ຂອງຄະນະກວດກາ ແລະ ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບຂໍ້ມູນ, ເອກະສານ ທີ່ໄດ້ສະໜອງໃຫ້;
2. ປະຕິບັດຕາມການສະເໜີ, ການຕົກລົງກ່ຽວກັບການແກ້ໄຂຜົນຂອງການກວດກາ ຂອງຄະນະກວດກາ ແລະ ອົງການທີ່ກ່ຽວຂ້ອງ;
3. ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດການແກ້ໄຂຜົນຂອງການກວດກາ ໃຫ້ຄະນະກວດກາຊາບ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 62. ສິດ ຂອງການຈັດຕັ້ງ ແລະ ບຸກຄົນ ທີ່ຖືກກວດກາ**

ການຈັດຕັ້ງ ແລະ ບຸກຄົນ ທີ່ຖືກກວດກາ ມີສິດ ດັ່ງນີ້ :

1. ສະເໜີ ໃຫ້ແຈ້ງຂໍ້ຕົກລົງ ກ່ຽວກັບການກວດກາ ໃຫ້ຕົນຊາບ;
2. ສະເໜີປ່ຽນບຸກຄົນ ໃນຄະນະກວດກາ ທີ່ເຄີຍມີຂໍ້ຂັດແຍ່ງກັບຕົນ;
3. ອະທິບາຍ, ຊີ້ແຈງ ບັນຫາຕ່າງໆ ທີ່ພົວພັນເຖິງເນື້ອໃນຂອງການກວດກາ;
4. ປະຕິເສດການສະໜອງຂໍ້ມູນ, ເອກະສານ ທີ່ບໍ່ພົວພັນເຖິງເນື້ອໃນຂອງການ ກວດກາ;
5. ສະເໜີຕໍ່ຜູ້ອອກຂໍ້ຕົກລົງໃຫ້ກວດກາ ກ່ຽວກັບການກະທຳຂອງຄະນະກວດກາ, ພະນັກງານກວດກາລັດ ແລະ ຜູ້ເຂົ້າຮ່ວມການກວດກາອື່ນ ທີ່ຕົນເຫັນວ່າບໍ່ຖືກຕ້ອງຕາມລະບຽບກົດໝາຍ;
6. ສະເໜີຄຳເຫັນ ກ່ຽວກັບບົດສະຫຼຸບລາຍງານຜົນຂອງການກວດກາ;

7. ສະເໜີໃຫ້ມີການທົດແທນ ຖ້າເຫັນວ່າຕົນໄດ້ຮັບຄວາມເສຍຫາຍ ຈາກການກວດກາທີ່ບໍ່ຖືກຕ້ອງ ຫຼື ຮ້ອງຟ້ອງ ຕາມລະບຽບກົດໝາຍ;
8. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 63. ຂໍ້ຫ້າມ ສຳລັບຜູ້ກວດກາ**

ຫ້າມຜູ້ກວດກາ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
2. ປະຕິບັດສິດ, ໜ້າທີ່ກວດກາເກີນຂອບເຂດ ຂອງຂໍ້ຕົກລົງ ຫຼື ລະເມີດລະບຽບກົດໝາຍ ກ່ຽວກັບການກວດກາ;
3. ບັງຄັບ ແລະ ນາບຂູ່ ເປົ້າໝາຍຖືກກວດກາ;
4. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປິດບັງ ຫຼື ປົກປ້ອງເປົ້າໝາຍຖືກກວດກາ;
5. ເປີດເຜີຍຄວາມລັບ ກ່ຽວກັບການກວດກາ ໂດຍບໍ່ໄດ້ຮັບອະນຸຍາດ;
6. ພົວພັນກັບຜູ້ຖືກກວດກາ ເພື່ອຫາຜົນປະໂຫຍດ;
7. ມີພຶດຕິກຳອື່ນ ທີ່ຜິດຕໍ່ລະບຽບກົດໝາຍ.

**ມາດຕາ 64. ຂໍ້ຫ້າມ ສຳລັບເປົ້າໝາຍຖືກກວດກາ**

ຫ້າມ ເປົ້າໝາຍຖືກກວດກາ ມີພຶດຕິກຳ ດັ່ງນີ້ :

1. ປະຕິເສດການສະໜອງຂໍ້ມູນ, ເອກະສານ ກ່ຽວກັບການກວດກາ;
2. ລາຍງານ, ສະໜອງຂໍ້ມູນ, ເອກະສານ ບໍ່ຖືກກັບຄວາມຈິງ; ຊຸກເຊື່ອງ, ທຳລາຍເອກະສານ, ວັດຖຸສິ່ງຂອງ ຊຶ່ງເປັນຫຼັກຖານ ທີ່ພົວພັນເຖິງການກວດກາ;
3. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ ຄະນະກວດກາ, ພະນັກງານກວດກາລັດ, ຜູ້ສະໜອງຂໍ້ມູນ ໃຫ້ແກ່ການກວດກາ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;
4. ຊື້ຈ້າງ, ໃຫ້ສິນບົນຄະນະກວດກາ, ພະນັກງານກວດກາລັດ, ຜູ້ສະໜອງຂໍ້ມູນ ກ່ຽວກັບການກວດກາ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;
5. ມີພຶດຕິກຳອື່ນ ທີ່ຜິດຕໍ່ລະບຽບກົດໝາຍ.

**ມາດຕາ 65. ຂໍ້ຫ້າມ ສຳລັບການຈັດຕັ້ງ ແລະ ບຸກຄົນອື່ນ**

ຫ້າມ ການຈັດຕັ້ງ ແລະ ບຸກຄົນອື່ນ ມີພຶດຕິກຳ ດັ່ງນີ້ :

1. ຍຸຍົງ ໃຫ້ມີການກວດກາ ຫຼື ໃຫ້ມີການຕ້ານການກວດກາ;
2. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ການກວດກາ;
3. ປົກປິດ, ເຊື່ອງອຳ ຫຼື ທຳລາຍຂໍ້ມູນ, ຫຼັກຖານ ກ່ຽວກັບການກວດກາ;
4. ໃຊ້ຄວາມຮຸນແຮງ, ນາບຂູ່ ຫຼື ທຳຮ້າຍ ຜູ້ກວດກາ, ຜູ້ໃຫ້ຂໍ້ມູນ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;

5. ປົກປ້ອງ, ຊຸກເຊື້ອງ ບຸກຄົນທີ່ຖືກກວດກາ;

6. ມີພຶດຕິກໍາອື່ນ ທີ່ຜິດຕໍ່ລະບຽບກົດໝາຍ.

## ພາກທີ VII
## ການຕິດຕາມກວດກາ

**ມາດຕາ 66. ປະເພດການຕິດຕາມກວດກາ**

ການຕິດຕາມກວດກາ ມີສອງປະເພດ ດັ່ງນີ້ :

- ການຕິດຕາມກວດກາພາຍໃນ;
- ການຕິດຕາມກວດກາພາຍນອກ.

**ມາດຕາ 67. ການຕິດຕາມກວດກາພາຍໃນ**

ການຕິດຕາມກວດກາພາຍໃນ ແມ່ນການກວດກາຕາມສາຍຕັ້ງ ໃນລະບົບການກວດກາຂອງອົງການກວດກາລັດ ຊຶ່ງຕ້ອງດໍາເນີນຢ່າງໜ້ອຍປີລະສອງຄັ້ງ.

ການຕິດຕາມກວດກາພາຍໃນ ມີຈຸດປະສົງ ກວດກາການເຄື່ອນໄຫວ ຂອງອົງການກວດກາລັດແຕ່ລະຂັ້ນ ໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ຍຸຕິທໍາ.

**ມາດຕາ 68. ການຕິດຕາມກວດກາພາຍນອກ**

ການຕິດຕາມກວດກາພາຍນອກ ແມ່ນດໍາເນີນໂດຍສະພາແຫ່ງຊາດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການຕິດຕາມກວດກາ ຂອງສະພາແຫ່ງຊາດ.

ນອກຈາກນີ້ ພົນລະເມືອງລາວທຸກຄົນ, ການຈັດຕັ້ງ ແລະ ບຸກຄົນ ຢູ່ຮາກຖານ, ສໍານັກງານ, ອົງການ, ຫົວໜ່ວຍວິຊາການ ແລະ ວິສາຫະກິດຂອງລັດ ກໍມີສິດຕິດຕາມ ກວດກາການເຄື່ອນໄຫວວຽກງານຂອງອົງການກວດກາລັດ ແລະ ຍັງມີສິດຕິດຕາມ ກວດກາການເຄື່ອນໄຫວວຽກງານ ຂອງການຈັດຕັ້ງ ແລະ ບຸກຄົນ ຢູ່ໃນອົງການບໍລິຫານລັດ ເພື່ອເປັນພື້ນຖານໃຫ້ແກ່ການກວດກາ ຂອງອົງການກວດກາລັດ; ເມື່ອພົບເຫັນ ຫຼື ມີປາກົດການທີ່ລະເມີດລະບຽບກົດໝາຍແລ້ວ ກໍມີສິດສະເໜີຕໍ່ອົງການທີ່ກ່ຽວຂ້ອງ ແລະ ອົງການຕົວແທນຂອງຕົນ ເພື່ອດໍາເນີນການກວດກາ ຕໍ່ເປົ້າໝາຍດັ່ງກ່າວ.

ການຕິດຕາມກວດກາພາຍນອກ ມີຈຸດປະສົງ ກວດກາການປະຕິບັດໜ້າທີ່ ຂອງອົງການກວດກາລັດ ແລະ ອົງການບໍລິຫານລັດ ເພື່ອໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ຍຸຕິທໍາ.

## ພາກທີ VIII
## ງົບປະມານ, ເຄື່ອງແບບ, ກາໝາຍ ແລະ ຕາປະທັບ

**ມາດຕາ 69. ງົບປະມານ**

ງົບປະມານ ຂອງອົງການກວດກາລັດຂັ້ນໃດ ແມ່ນຂຶ້ນກັບງົບປະມານ ຂອງອົງການບໍລິຫານຂັ້ນນັ້ນ.

**ມາດຕາ 70. ເຄື່ອງແບບ, ກາໝາຍ ແລະ ບັດກວດກາ**

ເຄື່ອງແບບ, ກາໝາຍ ແລະບັດກວດກາ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 71. ຕາປະທັບ**

ໃນການເຄື່ອນໄຫວວຽກງານຂອງຕົນ ອົງການກວດກາລັດຕາມຂັ້ນບໍລິຫານການປົກຄອງ ແລະ ຕາມຂະແໜງການ ມີຕາປະທັບສະເພາະຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນ ລະບຽບການຕ່າງຫາກ.

## ພາກທີ IX
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 72. ນະໂຍບາຍຕໍ່ຜູ້ມີຜົນງານ**

ການຈັດຕັ້ງ ຫຼື ບຸກຄົນ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ແມ່ນໄດ້ໃຫ້ການຮ່ວມມື, ສະໜອງຂໍ້ມູນແກ່ການກວດກາ ຈະໄດ້ຮັບ ການປົກປ້ອງ, ການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 73. ມາດຕະການຕໍ່ຜູ້ລະເມີດ**

ການຈັດຕັ້ງ ຫຼື ບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດວິໄນ ຫຼື ດຳເນີນຄະດີ ຕາມລະບຽບກົດໝາຍ ຕາມກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 74. ມາດຕະການສຶກສາອົບຮົມ**

ບຸກຄົນໃດທີ່ມີພຶດຕິກຳ ທີ່ກໍ່ຄວາມເສຍຫາຍໜ້ອຍ, ມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ຄວາມຜິດຂອງຕົນ ຕໍ່ການຈັດຕັ້ງ ແລະ ສິ່ງຊັບທີ່ໄດ້ເອົາໄປ ໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ແກ່ການຈັດຕັ້ງຢ່າງຄົບຖ້ວນແລ້ວ ກໍຈະໄດ້ຮັບການສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 75. ມາດຕະການທາງວິໄນ**

ບຸກຄົນໃດ ທີ່ໄດ້ກະທຳຜິດໃນສະຖານເບົາ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດ ກໍຈະຖືກປະຕິບັດວິໄນ ຕາມແຕ່ກໍລະນີ ດັ່ງນີ້ :

- ຕິຕຽນ, ກ່າວເຕືອນຄວາມຜິດ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານ ຊີວະປະຫວັດຂອງບຸກຄົນນັ້ນ;
- ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
- ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າເກົ່າ;
- ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 76. ມາດຕະການທາງແພ່ງ**

ບຸກຄົນໃດ ທີ່ໄດ້ລະເມີດລະບຽບກົດໝາຍ ຊຶ່ງກໍ່ຄວາມເສຍຫາຍ ຕໍ່ຊັບສິນຂອງການຈັດຕັ້ງ ຫຼື ບຸກຄົນອື່ນ ກໍຈະໄດ້ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນນັ້ນ ຢ່າງຄົບຖ້ວນ.

**ມາດຕາ 77. ມາດຕະການທາງອາຍາ**

ບຸກຄົນໃດ ທີ່ໄດ້ລະເມີດກົດໝາຍ ຊຶ່ງເປັນການກະທຳຜິດທາງອາຍາ ເປັນຕົ້ນ ການສວຍໃຊ້ສິດອຳນາດໜ້າທີ່ເກີນຂອບເຂດ, ການປອມແປງເອກະສານ ແລະ ພຶດຕິກຳອື່ນ ທີ່ເປັນການສໍ້ລາດບັງຫຼວງ ກໍຈະຖືກດຳເນີນຄະດີທາງອາຍາ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 78. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 79. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງຫົກສິບວັນ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ທອງສິງ ທຳມະວົງ